# ຄວາມຮູ້ພູມປັນຍາທ້ອງຖິ່ນ

# ການປູກໝາກແຕງ

(ສະບັບທົດລອງ)



ຂຽນໂດຍ: ນາງແສນ ຈັນທະວົງ

ຂໍ້ມູນຈາກ: ບ້ານ ສີມມະໂນ ເມືອງຫາດຊາຍຟອງ

ນະຄອນຫຼວງວຽງຈັນ

ປີ 2006

PDF created with pdfFactory Pro trial version www.pdffactory.com

# ຄວາມຮູ້ພູມປັນຍາທ້ອງຖິ່ນ

# ການປູກໝາກແຕງ


ຮີບໂຮມ ແລະຈັດໜ້າໂດຍ: ທ້າວ ໂພໄຊ ດວງສະຫວັນ

ຮຽບຮຽງໂດຍ: ອ.ຈ ໂພໄຊ ຈັນທະວົງສາ

ອ.ຈ ເກດມະນີ ບັນດາສັກ

ອ.ຈ ຄຳໄຫວ ອິນທະວົງ

ອ.ຈ ລັ່ງ ແສງດາລາ

ອ.ຈ ທອງຂັນ ສີລິໂພຄຳ

ແຕ້ມໂດຍ: ທ້າວ ອູ່ທອງ ແສງນາລີ



ເຈົ້າຂອງ: ພະແນກສຶກສານະຄອນຫຼວງວຽງຈັນ ແລະ

ສູນອົບຮົມຮ່ວມພັດທະນາ



PDF created with pdfFactory Pro trial version www.pdffactory.com

# ຄຳນຳ

ປື້ມພູມປັນຍາທ້ອງຖິ່ນຫົວນີ້ໄດ້ມາຈາກການຊຽນຂອງຊາວບ້ານແລະອາສາສະໝັກເຊິ່ງໄດ້ຮຽບຮຽງເບື້ອງຕົ້ນຈາກຄະນະອຳນວຍການສູນອົບຮົມຮ່ວມພັດທະນາແລະພະແນກສຶກສານະຄອນຫຼວງວຽງຈັນ

ປື້ມຫົວນ້ອຍຫົວນີ້ໄດ້ບັນຈຸເນື້ອໃນທີ່ເວົ້າເຖິງຫົວຂໍ້ໃດໜຶ່ງໂດຍມີຫຼາຍກິດຈະກຳທີ່ຈະເປັນການທົດລອງເອົາຄວາມຮູ້ທ້ອງຖິ່ນເຂົ້ານຳພາແລະສິດສອນນັກຮຽນຊັ້ນປະຖົມໂດຍເອົາບົດທີ່ງ່າຍສອນຊັ້ນປະຖົມ ປໍ 1 ປໍ 2 ແລະບົດທີ່ຍາກກໍສອນຊັ້ນໃຫຍ່ຂຶ້ນໄປ.

ຄະນະຈັດທຳຫວັງຄິດວ່າປື້ມຫົວນີ້ຄົງເປັນບ່ອນອີງອັນໜຶ່ງໃຫ້ແກ່ຄູອາຈານກໍຄືອາສາສະໝັກທີ່ຈະໄປສອນເດັກປະຖົມບໍ່ຫຼາຍກໍໜ້ອຍ

ຄະນະຈັດທຳຄິດວ່າຍັງມີຫຼາຍເນື້ອໃນທີ່ບໍ່ທັນພຽງພໍແລະຂາດໄປຫວັງວ່າຄົງໄດ້ຮັບການຕິຊົມຈາກທຸກທ່ານ ພວກເຮົາພ້ອມທີ່ຈະປັບປຸງນຕາມຄວາມເໝາະສົມ.

ຄະນະຈັດທຳ

PDF created with pdfFactory Pro trial version www.pdffactory.com

## <u>ຄວາມເປັນມາ:</u>

ການປູກໝາກແຕງແມ່ນເຄີຍປູກກັນມາແຕ່ພໍ່ແຕ່ແມ່ມາ. ແຕ່ການປູກໝາກແຕງໃນເມື່ອກ່ອນແມ່ນພໍ່ແມ່ເພິ່ນພາປູກຢູ່ໄຮ່ບ່ອນທີ່ມີໄຟໄໝ້ເປັນຝຸ່ນເອີ້ນວ່າ: ໝາກແຕງໄຮ່ ຫຼືໝາກແຕງລາຍ. ການຮັບປະທານແມ່ນຕຳສົ້ມ, ກິນສຸກຫຼືກິນກັບລາບ, ກັບປີ່ນ, ກັບຕຳປາແດກເຄື່ອງມີຄວາມແຊບຊ້ອຍດີ.

ແຕ່ໃນປະຈຸບັນມີການຂະຫຍາຍໃນການປູກໝາກແຕງຫຼາຍສາຍພັນມີແຕງໄຮ່, ແຕງຊ້າງໝ່ວຍໃຫຍ່, ແຕງຂີ້ໄກ່ຫຼືແຕງພື້ວ ແລະແຕງຫວານ

PDF created with pdfFactory Pro trial version www.pdffactory.com

## ອຸປະກອນ:

ຈົກ



ຄາດ



ແນວພັນປູກ



PDF created with pdfFactory Pro trial version www.pdffactory.com

ໄຖ



ໄມ້ຫຼັກ, ໄມ້ຄ້ຳ, ຕອກມັດຮາວ



PDF created with pdfFactory Pro trial version www.pdffactory.com

ຜ້າຢາງຄຸມຫຍ້າ



ຝຸ່ນຄອກ



PDF created with pdfFactory Pro trial version www.pdffactory.com

**ຂັ້ນຕອນໃນການເຮັດ:**

ໄຖພື້ນທີ່ຕາກແດດໜຶ່ງອາທິດແລ້ວຄາດ



ຂຶ້ນຄູປົກຜ້າຢາງຄຸມຫຍ້າ ເຈາະປ່ອງຮ່ອງປູກ 30-40 ຊັງຕີແມັດ



PDF created with pdfFactory Pro trial version www.pdffactory.com

ລົງແກ່ນມ່ານ້ຳຫໍຜ້າໝັກດິນພໍໜໍ່ຈໍ່ກໍ່ແມ່ນເລີ່ມລົງມືປູກໄດ້



ພໍປູກໄດ້ 15 ວັນກໍກຽມປັກຄ້າງ ມັດຮາວໃສ່ຝຸ່ນຄອກ ຫົດນ້ຳໃຫ້ສະໝ່ຳສະເໝີ



PDF created with pdfFactory Pro trial version www.pdffactory.com

ພໍໄດ້ 1 ເດືອນແຕງກໍຈະອອກດອກ ຈໍ່ໝາກ ໝາກແຕງມີອາຍຸ 45 ວັນກໍຈະໄດ້ຮັບຜົນດີ



## <u>ຜົນປະໂຫຍດ:</u>

ໝາກແຕງແຊງ ຫຼືແຕງຂີ້ໄກ່ເປັນອາຫານເສີມຊະນິດໜຶ່ງທີ່ປະກອບໃນຄາບເຂົ້າ ຕໍາສົ້ມ, ກິນກັບລາບກັບປີ້ນ.... ນອກຈາກເປັນອາຫານປະກອບພາຍໃນຄອບຄົວແລ້ວຍັງຂາຍເປັນລາຍຮັບເພີ່ມພາຍໃນຄອບຄົວ.

PDF created with pdfFactory Pro trial version www.pdffactory.com

## ກາບ:ໝາກແຕງ

ຂ້ອຍຂໍເວົ້າ
ການເຮັດສວນແຕງ
ລາຄາແພງ
ໝາກແຕງພັນໃໝ່
ໝ່ອຍໃດໃຫຍ່
ຂາຍເປັນລາຄາ
ປູກຂຶ້ນມາ
ຂາຍສູ່ຕະຫຼາດ
ບໍ່ໃຫ້ຂາດ
ແຕງລາຍແຕງກວາ
ເຮັດໃຫ້ທົ່ວ
ເລາະລຽບແຄມຂອງ
ພວກເຮົາຕ້ອງ
ບົວລະບັດຮັກສາ
ແຕງໃຫຍ່ມາ
ເຫຼືອກິນຂາຍອອກ

## ເພງ: ໝາກແຕງ

ໂອ..ແຕງແຕງ
ໝາກແຕງມັນມີຫຼາຍແນວ
ແຕງແກ້ວ
ແຕງກວາແຕງລາຍ (ຊ້ຳ)
ຍັ້ງຍາຍ
ໄປທົ່ວພື້ນໄຮ່
ແຕງນ້ອຍແຕງໃຫຍ່
ກໍກິນໄດ້ເໝືອນກັນ

PDF created with pdfFactory Pro trial version www.pdffactory.com

## ເຊີ້ງ: ພາກັນປູກແຕງ

ໂຮ.......................ຮິວ*3

ມາພວກເຮົາມາ　　ພາກັນປູກແຕງ
ປູກທົ່ວທຸກແຫ່ງ　　ເລາະລຽບແຄມຂອງ
ນ້ຳຂຶ້ນໄຫຼນອງ　　ຍ້າຍບ່ອນປູກໄດ້
ໄປປູກຢູ່ໄຮ່　　ກຳງານຄືກັນ
ແຕ່ສິ່ງສຳຄັນ　　ຕ້ອງໝັ່ນຮັກສາ
ຮົ້ວສວນໄຮ່ນາ　　ຕ້ອງມັດໃຫ້ດີ
ເພາະຢ້ານມັນມີ　　ງົວຄວາຍເຂົ້າມາ
ໝາກແຕງໃຫຍ່ມາ　　ສົ່ງຂາຍອອກໄດ້

## ລຳ: ໝາກແຕງ

ໂອລະນໍ　　ນວນເອີຍສວາຍແລ້ວ
ຟັງເດີ້ເຈົ້າ　　ຂ້ອຍຊິເລົ່າເລື່ອງໝາກແຕງ
ລາຄາແພງ　　ໝາກແຕງໝ່ວຍໃຫຍ່
ປູກຢູ່ໄຮ່　　ຕາມທົ່ງນາສວນ
ເຮັດກັນເປັນຂະບວນ　　ພາກັນມ່ວນຊື່ນທໍ່ນີ້ແລ້ວ

PDF created with pdfFactory Pro trial version www.pdffactory.com

# ຮູບແລະປະຫວັດຂອງຜູ້ຂຽນ



**ຊື່**: ທ່ານ ນາງແສນ **ນາມສະກຸນ**: ຈັນທະວົງ

**ອາຍຸ**: 50 ປີ **ອາຊີບ**: ຊາວນາ

## ເຫດຜົນຂອງການຂຽນປື້ມຫົວນີ້:

ການຂຽນປື້ມຫົວນີ້ຂື້ນມາກໍເພື່ອອະນຸລັກພູມປັນຍາທ້ອງຖິ່ນຊຶ່ງພໍ່ແມ່ຂອງພວກເຮົາໄດ້ນຳພາເຮັດມາເປັນເວລາດົນນານແລ້ວໄດ້ຖ່າຍທອດໄປເຖິງຄົນຮຸ່ນຫຼັງ

PDF created with pdfFactory Pro trial version www.pdffactory.com